# ລາວ-ຫວຽດນາມສືບຕໍ່ຂະຫຍາຍການຮ່ວມມືດ້ານການທະນາຄານ



ໃນຕອນແລງຂອງວັນທີ 7 ກຸມພາ ຜ່ານມາ ທີ່ຫ້ອງຮັບແຂກທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ ທ່ານ ສົມພາວ ໄຟສິດ ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າພົບປະ ແລະ ເຮັດວຽກຂອງຄະນະຜູ້ແທນຂັ້ນສູງສຸດຂອງທະນາຄານຫວຽດຕິນ (Vietin Bank) ເຊິ່ງນໍາໂດຍທ່ານ ດຣ ຟາມ ຮຸຍຮຸງ ( Pham Huy Hung) ປະທານສະພາບໍລິຫານ ທະນາຄານຫວຽດຕິນ ແຫ່ງ ສສ ຫວຽດນາມ ພ້ອມດ້ວຍຄະນະ.

ໃນໂອກາດນີ້ທ່ານປະທານສະພາບໍລິຫານທະນາຄານຫວຽດຕິນ ກໍໄດ້ແຈ້ງສະພາບການກະກຽມ ແລະ ສ້າງຕັ້ງສາຂາທະນາຄານຫວຽດຕິນຢູ່ ສປປ ລາວ ໂດຍໄດ້ຍົກໃຫ້ເຫັນບັນຫາຕ່າງໆ ໂດຍສະເພາະແມ່ນທ່ານປະທານສະພາບໍລິຫານທະນາຄານຫວຽດຕິນ ໄດ້ຕີລາຄາສູງຕໍ່ຄວາມພະຍາຍາມ ແລະ ໃຫ້ການເອົາໃຈໃສ່ຊ່ວຍເຫຼືອຂອງລັດຖະບານລາວ ແລະ ທະນາຄານແຫ່ງ ສປປ ລາວ ໃນການກໍ່ສ້າງ ແລະ ດໍາເນີນການຈົນສໍາເລັດ ແລະ ໃນເວລາດຽວກັນນັ້ນທ່ານປະທານສະພາບໍລິຫານທະນາຄານດັ່ງກ່າວຍັງໄດ້ຢືນຢັນຕື່ມອີກວ່າ: ທະນາຄານຫວຽດຕິນ ຈະໄດ້ ຂັບເຄື່ອນການທໍາທຸລະກໍາຢ່າງຖືກຕ້ອງບົນ

ລະບຽບກົດໝາຍຂອງລາວ ແລະ ພ້ອມນັ້ນກໍຈະໃຫ້ການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງລາວ.

ທະນາຄານຫວຽດຕິນ ໄດ້ໃຫ້ການຊ່ວຍເຫຼືອແກ່ລັດຖະບານ ແລະ ປະຊາຊົນລາວໃນໄລຍະຜ່ານມາ ແລະ ຍັງໄດ້ຢືນຢັນວ່າຈະສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສອງຊາດ ໂດຍສະເພາະທະນາຄານຂອງສອງປະເທດໃຫ້ຂະຫຍາຍຕົວຍິ່ງໆຂຶ້ນ.

ທ່ານ ສົມພາວ ໄຟສິດ ກໍໄດ້ຕາງໜ້າໃຫ້ການນຳທະນາຄານແຫ່ງ ສປປ ລາວ ຂໍສະແດງຄວາມຂອບໃຈອັນລົ້ນເຫຼືອຕໍ່ກັບການຊ່ວຍເຫຼືອຂອງລັດຖະບານແຫ່ງ ສສ ຫວຽດນາມ ຕໍ່ ສປປ ລາວ ໂດຍສະເພາະຈາກທະນາຄານຫວຽດຕິນ ແລະ ຂໍໃຫ້ທະນາຄານຂອງສອງປະເທດ ຈົ່ງສືບຕໍ່ເພີ່ມທະວີການພົວພັນ-ຮ່ວມມືໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ.